ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ເຂົ້າຮ່ວມວາງສະແດງຜະລິດຕະພັນໃນງານ ລາວ ໄອຊີທີ ເອັກສໂປ 2019




ງານວາງສະແດງລາວ ໄອຊີທີ ເອັກສໂປ 2019 ໄດ້ເປີດຂຶ້ນໃນວັນທີ 25 ຫາ 29 ມິຖຸນາ  2019 ໂດຍມີບັນດາພາກລັດ ແລະ ເອກະຊົນ ເຂົ້າຮ່ວມນຳສະເໜີຜົນງານຂອງຕົນຢ່າງຫຼວງຫຼາຍແລະ ໄດ້ຈັດຂຶ້ນຢູ່ທີ່ໂຮງແຮມດອນຈັນ ພລາເລດ ໂດຍກະຊວງໄປສະນີໂທລະຄົມ ແລະ ການສື່ສານ ເປັນເຈົ້າການຈັດກິດຈະກຳດັ່ງກ່າວພາຍໃນງານແມ່ນໄດ້ຮັບກຽດຈາກທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ ເຂົ້າຮ່ວມຊົມບັນດາຜະລັດຕະພັນດ້ານ ICT ຂອງພາກລັດ ແລະ ເອກະຊົນ. ໃນນັ້ນ, ທະນາຄານແຫ່ງ ສປປ ລາວ ກໍ່ໄດ້ນຳເອົາຜົນງານດ້ານ ICT ຂອງຕົນເຂົ້າຮ່ວມວາງສະແດງ.

ໃນບູດວາງສະແດງຂອງ ທຫລ ໄດ້ນຳສະເໜີຜົນງານດ້ານ ICT ເຊັ່ນ: ວຽກງານຂໍ້ມູນຂ່າວສານສິນເຊື່ອ, ວຽກງານການຊຳລະແບບອີເລັກໂຕຼນິກ ແລະ ວຽກງານ LAPSNet ເຊິ່ງໄດ້ຮັບຄວາມສົນໃຈຈາກການນຳຂອງພັກລັດຖະບານ ແລະ ປະຊາຊົນ ເປັນຈຳນວນຫຼາຍ.







# ຂ່າວ-ພາບ: ສົມອຶກ ເຄນຄຳແພງ.